*Journal of Science and Teacher Education (JLSTE), 2*(1), 21-29
**P-ISSN:** 3078-5405; **E-ISSN:** 3080-2628

# ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ໃນໂຮງຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູຄັງໄຂ ສົກຮຽນ 2024-2025

*ປານີ ມາໄລສານ*
*ພະແນກຄົ້ນຄວ້າວິທະຍາສາດ ແລະ ພັດທະນາວິຊາຊີບຄູ, ວິທະຍາໄລຄູຄັງໄຂ*

---

## ບົດຄັດຫຍໍ້

ບົດຄົ້ນຄວ້ານີ້ມີຈຸດປະສົງເພື່ອ (1) ເພື່ອສຶກສາສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດ ສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025. (2) ເພື່ອສຶກສາຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025. ການສຶກສາຄັ້ງນີ້ໄດ້ນຳໃຊ້ແບບປະລິມານ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ນັກຮຽນຊັ້ນ ມ7 ເຊິ່ງມີຈຳນວນທັງໝົດ 17 ຄົນ, ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ແບບສອບຖາມ, ສະຖິຕິທີ່ໃຊ້ໄດ້ແກ່ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ, ການວິເຄາະຂໍ້ມູນແມ່ນໄດ້ກຳນົດໃຊ້ຜົນການວິເຄາະຂໍ້ມູນສະແດງອອກຄື: 1) ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ 7 ສົກຮຽນ 2024-2025 ໂດຍ ລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍຄ່າ, ຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.48, SD=0.04). 2) ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025 ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=4.12, SD= 0.04).

***ຄຳສັບສຳຄັນ:*** *ພັດທະນາແນວທາງການມີສ່ວນຮ່ວມ, ການປະຕິບັດກິດຈະກຳກຸ່ມ, ການມີສ່ວນຮ່ວມ, ຜົນການຮຽນຮູ້.*

**ຂໍ້ມູນບົດຄວາມ**

---

**ຕິດຕໍ່ພົວພັນ: ປານີ ມາໄລສານ; ໂທ: 020 22344556;*
*ອີເມວ: Panymls7576@gmail.com*

Received 24 November 2025
Received in revised form 31 December 2025
Accepted 22 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

# A Study on the Development of Student Participation Guidelines for Group Activities in History for Grade 7 at the Demonstration School, Khangkhay Teacher Training College, Academic Year 2024-2025

*Pany Malaisan**
*Department of Scientific Research and Teacher Professional Development,*
*KhangKhay Teacher Training College*

## Abstract

This research aimed to: (1) examine the level of student participation in group activities in the History subject among Grade 7 secondary school students during the 2024–2025 academic year; and (2) investigate students' learning outcomes after the implementation of group-based teaching techniques in History for Grade 7 during the same academic year. A quantitative research approach was employed. The sample consisted of 17 Grade 7 students, selected as the study group. The research instrument used was a questionnaire. Data were analyzed using descriptive statistics, including mean and standard deviation. The findings revealed that: (1) the overall level of student participation in group activities in the History subject was high, with a mean score of 3.48 and a standard deviation of 0.04; and (2) students' learning outcomes after the use of group-based teaching techniques were also at a high level, with a mean score of 4.12 and a standard deviation of 0.04. These results indicate that the application of grouping techniques in History instruction effectively promotes student participation and enhances learning outcomes at the secondary school level.

***Keywords:*** Develop a participatory approach, Group activity implementation, Participation, Learning outcomes

**ARTICLE INFO**

**Correspondence: Pany Malaisan; Tel: 020 22344556; Email: Panymls7576 @gmail.com*

Received 24 November 2025
Received in revised form 31 December 2025
Accepted 22 January 2026

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາຖືວ່າເປັນເລື່ອງທີ່ສຳຄັນຫຼາຍທີ່ສຸດສຳລັບທຸກໆປະເທດໃນໂລກ ເພາະເປັນຕົ້ນກຳເນີດແຫ່ງການພັດທະນາທີ່ບໍ່ມີວັນສິ້ນສຸດ ດັ່ງຄຳເວົ້າຂອງ ທ່ານເລນິນໄດ້ກ່າວໄວ້ວ່າ "ຮຽນແລ້ວ ຮຽນອີກຮຽນເລື້ອຍໆໄປ" ເຊິ່ງກົງກັບຍຸດທະສາດການສຶກສາແຫ່ງຊາດທີ່ໄດ້ກຳນົດແຜນຍຸດທະສາດໄວ້ວ່າຕ້ອງເອົາວຽກງານການສຶກສາໄປກ່ອນບາດກ້າວໜຶ່ງເພື່ອພັດທະນາຊັບພະຍາກອນມະນຸດກໍຄືພັດທະນາຄົນລາວໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນເລື້ອຍໆ ເພື່ອຮອງຮັບກະແສຂອງການປ່ຽນແປງຂອງໂລກທາງດ້ານເສດຖະກິດ, ສັງຄົມ ແລະ ເທັກໂນ່ໂລຢີທີ່ທັນສະໄໝ, ໃຫ້ຄວາມສຳຄັນສູງສຸດໃນຂະບວນການປະຕິຮູບການຮຽນຮູ້ ຢຶດຖືຜູ້ຮຽນເປັນສຳຄັນ ເພື່ອໃຫ້ຜູ້ຮຽນໄດ້ຮັບການພັດທະນາເຕັມຕາມສັກກາຍະພາບສາມາດຮຽນຮູ້ໄດ້ດ້ວຍຕົນເອງ, ຮູ້ຈັກສະແຫວງຫາຄວາມຮູ້ໄດ້ຢ່າງຕໍ່ເນື່ອງຕະຫຼອດຊີວິດແນວທາງການຈັດການຮຽນ-ການສອນຕາມຍຸດທະສາດການສຶກສາແຫ່ງຊາດ ແລະ ຍັງລະບຸໄວ້ໃນຕ້ອງຢຶດຖືຄວາມແຕກຕ່າງລະຫວ່າງບຸກຄົນ, ຈັດກິດຈະກຳໃຫ້ຜູ້ຮຽນໄດ້ຮຽນຮູ້ຈາກປະສົບການຕົວຈິງ, ໃຫ້ນັກຮຽນໄດ້ເຝິກປະຕິບັດ, ໃຫ້ນັກຮຽນຄິດເປັນ, ເຮັດເປັນໂດຍມີເປົ້າໝາຍໃຫ້ຜູ້ຮຽນກາຍເປັນມະນຸດທີ່ສົມບູນເປັນຄົນດີ, ເປັນຄົນເກັ່ງ ແລະ ມີຄວາມສຸກຢ່າງແທ້ຈິງ (ວັນນີ ຢ່າງເຈຍມືວ, 2019).

ໂຮງຮຽນ ມສ ສາທິດຄັງໄຂ ເປັນໂຮງຮຽນໜຶ່ງທີ່ມີການຈັດການຮຽນ-ການສອນ ໄປຕາມຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ, ເປັນໂຮງຮຽນທີ່ຂຶ້ນກັບວິທະຍາໄລຄູຄັງໄຂ. ການສອນຂອງຄູສ່ວນຫຼາຍແມ່ນສອນແບບເອົາຄູເປັນໃຈກາງ, ນັກຮຽນມີສ່ວນຮ່ວມໜ້ອຍ, ຕາມການສຶກສາສະພາບບັນຫາໃນປັດຈຸບັນຢູ່ທີ່ໂຮງຮຽນ ມສ ສາທິດຄັງໄຂ ເມືອງແປກ ແຂວງຊຽງຂວາງ ສົກຮຽນ 2024-2025 ເຫັນວ່ານັກຮຽນສ່ວນຫຼາຍແມ່ນບໍ່ມີຄວາມເຂົ້າໃຈ ແລະ ບໍ່ສາມາດອະທິບາຍ, ລຽງລຳດັບເຫດການປະຫວັດສາດ ໄດ້ຢ່າງຖືກຕ້ອງປານໃດເທື່ອ.

ຄຽງຄູ່ກັບການຮຽນ-ການສອນໃນໄລຍະຜ່ານມານັ້ນພໍສັງເກດເຫັນວ່າ ນັກຮຽນຈຳນວນໜຶ່ງມີຄວາມກະຕືລືລົ້ນໃນການສຶກສາຄົ້ນຄວ້າ, ເຂົ້າໃຈບັນດາບັນຫາຕ່າງໆທີ່ຄູຕັ້ງຂຶ້ນ ແລະ ຍັງມີຈຳນວນໜຶ່ງຍັງບໍ່ທັນປະກອບສ່ວນໃນຂະບວນການຮຽນເທົ່າທີ່ຄວນການອະທິບາຍຍັງບໍ່ທັນຈະແຈ້ງ ແລະ ກວ້າງຂວາງ. ເວົ້າສະເພາະໃນສາຂາ ວິຊາປະຫວັດສາດ ເຫັນວ່າຄູ-ອາຈານ ແລະ ນັກຮຽນຈຳນວນໜຶ່ງບາງຄັ້ງຍັງບໍ່ໄດ້ເອົາໃຈໃສ່ຕໍ່ການຮຽນ-ການສອນ ແລະ ຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ການຄົ້ນຄວ້າຮ່ຳຮຽນເທົ່າທີ່ຄວນ.

ຈາກເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຜູ້ວິໄຈ ຈຶ່ງເຫັນໄດ້ຄວາມສຳຄັນ ໃນການຈັດກິດຈະກຳການຮຽນ-ການສອນ ໂດຍເລືອກເອົາໂຮງຮຽນມັດທະຍົມສົມບູນສາທິດຄັງໄຂ ເມືອງແປກແຂວງຊຽງຂວາງ ເປັນບ່ອນສຶກສາ ແລະ ເຊື່ອວ່າບົດວິໄຈນີ້ຈະເປັນປະໂຫຍດໃຫ້ແກ່ຄູຜູ້ສອນ ແລະ ເປັນປະໂຫຍດໃຫ້ແກ່ຜູ້

ບໍລິຫານ ກໍຄືຜູ້ວາງແຜນໃນການຈັດການຮຽນ-ການສອນໃນຕໍ່ໜ້າໃຫ້ດີຂຶ້ນ. ສະນັ້ນ; ຜູ້ວິໄຈ ຈຶ່ງໄດ້ເລືອກເອົາຫົວຂໍ້ກ່ຽວກັບພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ໃນໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູດົງໄຂ ສົກຮຽນ 2024-2025 ມາເປັນຫົວຂໍ້ໃນການວິໄຈໃນຄັ້ງນີ້.

*1.2 ຄຳຖາມຂອງການຄົ້ນຄ້ວາ*

1. ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025 ເປັນແນວໃດ?

2. ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025 ເປັນແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄວ້າ*

1. ເພື່ອສຶກສາສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ 7 ສົກຮຽນ 2024-2025.

2. ເພື່ອສຶກສາຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025.

## 2. ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການພັດທະນາໝາຍເຖິງ ການປ່ຽນແປງທີ່ມີການເຮັດໃຫ້ເກີດຂຶ້ນ ຫຼື ມີການວາງແຜນກຳນົດທິດທາງໄວ້ລ່ວງໜ້າໂດຍການປ່ຽນແປງນີ້ຕ້ອງເປັນໄປໃນທິດທາງທີ່ດີຂຶ້ນຖ້າປ່ຽນແປງໄປໃນທິດທາງທີ່ບໍ່ດີກໍບໍ່ເອີ້ນວ່າ ການພັດທະນາ. ການພັດທະນາ ອີກຮູບແບບໜຶ່ງຂອງທິດສະດີກ່ຽວກັບການພັດທະນາມີແນວຄິດໃນການພັດທະນາຢູ່ 5 ປະການຄື: (1) ເນັ້ນການພັດທະນາໃນເລື່ອງຄວາມຕ້ອງການຂັ້ນພື້ນຖານຂອງຄົນ (2) ເປັນການພັດທະນາຈາກການລິເລີ່ມ ແລະ ການດຳເນີນການຈາກພາຍໃນ, (3) ເປັນການພັດທະນາທີ່ຍຶດຫຼັກການເພິ່ງຕົນເອງ, (4) ເປັນການພັດທະນາທີ່ສອດຄ່ອງກັບສະພາບແວດລ້ອມ, (5) ເປັນການພັດທະນາທີ່ມີການປ່ຽນແປງທາງໂຄງສ້າງໃຫ້ມີການກະ ຈາຍໝາກຜົນຂອງການພັດທະນາໃຫ້ທົ່ວເຖິງທັງລະດັບລະຫວ່າງປະເທດ , ລະດັບທ້ອງຖິ່ນ ແລະ ໃນສາຂາການພັດທະນາທາງດ້ານເສດຖະກິດ, ສັງຄົມ ແລະ ການເມືອງ (ບັນຊຸພົນ ຂັນໄຊ, 2010). ການພັດທະນາແມ່ນການເຮັດໃຫ້ເກີດການປ່ຽນແປງຈາກສະພາບໜຶ່ງໄປສູ່ອີກສະພາບໜຶ່ງ ທີ່ດີກວ່າເດີມຢ່າງເປັນລະບົບ ຫຼື ເຮັດໃຫ້ດີຂຶ້ນກວ່າສະພາບເດີມທີ່ເປັນຢູ່ຢ່າງເປັນລະບົບ (ຍຸວັດ ວຸດເມທີ, 2003, ໜ້າ. 1). ການພັດທະນາເປັນ ການປຽບທຽບທາງດ້ານຄຸນນະພາບ ລະຫວ່າງສະພາບການຂອງສິ່ງໃດສິ່ງໜຶ່ງໃນຊ່ວງເວລາທີ່ຕ່າງກັນຄືຖ້າໃນປັດຈຸບັນສະພາບຂອງສິ່ງນັ້ນດີກວ່າສົມບູນກວ່າກໍສະແດງວ່າເປັນການພັດທະນາ (ປະກອນ ປິຍາກອນ, 1995, ໜ້າ. 5). ການພັດທະນາໝາຍເຖິງການປ່ຽນແປງສິ່ງໃດສິ່ງໜຶ່ງໃຫ້ເກີດຄຸນນະພາບດີຂຶ້ນກວ່າເກົ່າ ຄວາມໝາຍນີ້ນັບວ່າເປັນຄວາມໝາຍທີ່ຮູ້ຈັກກັນໂດຍທົ່ວໄປເພາະນຳມາໃຊ້ຫຼາຍກວ່າຄວາມໝາຍອື່ນໆ ເຖິງວ່າຈະບໍ່ເປັນທີ່ຍອມຮັບຂອງນັກວິຊາການກໍຕາມ (ສົນທະຍາ ພົນສີ, 2004, ໜ້າ. 2).

ຈາກທິດສະດີຂອງບັນດາທ່ານທີ່ເວົ້າມາຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າ ການພັດທະນາໝາຍເຖິງການເຮັດໃຫ້ເກີດການປ່ຽນແປງຈາກສະພາບໜຶ່ງ ໄປສູ່ອີກສະພາບໜຶ່ງທີ່ດີກວ່າເດີມຢ່າງເປັນລະບົບ, ເປັນການປ່ຽນແປງສິ່ງໃດສິ່ງໜຶ່ງໃຫ້ເກີດຄຸນນະພາບດີຂຶ້ນກວ່າເກົ່າ, ເປັນການປຽບທຽບທາງດ້ານຄຸນນະພາບລະຫວ່າງສະພາບການຂອງສິ່ງໃດສິ່ງໜຶ່ງໃນຊ່ວງເວລາທີ່ຕ່າງກັນ.

ວິທີສອນແບບແບ່ງກຸ່ມ ເປັນວິທີສອນແບບຄູມອບໝາຍວຽກງານໃຫ້ນັກຮຽນເຮັດຮ່ວມກັນເປັນໝູ່ຄະນະເພື່ອຊ່ວຍກັນຄົ້ນຄວ້າແກ້ບັນຫາ ຫຼື ປະຕິບັດກິດຈະກຳຕາມຄວາມສາມາດຕາມຄວາມຖະໜັດ ຫຼື ຕາມຄວາມສົນໃຈ (ສະເຫຼີມ ມະລິລາ, 2002) ການເຮັດວຽກຮ່ວມກັນເປັນກຸ່ມປະກອບດ້ວຍອີງປະ ກອບພື້ນຖານທີ່ສຳຄັນ 3 ປະການຄື ກິດຈະກຳ, ການກະທຳຮ່ວມກັນ ແລະ ຄວາມຮູ້ສຶກ ເຊິ່ງອີງປະກອບທັງສາມຢ່າງຈະກ່ຽວພັນກັນໂດຍກົງຄືຖ້າຫາກວ່າບຸກຄົນຍິ່ງມີສ່ວນຮ່ວມໃນກິດຈະກຳຫຼາຍເທົ່າໃດການກະທຳຮ່ວມກັນ ແລະ ຄວາມຮູ້ສຶກຂອງພວກເຂົາຈະມີລາຍຂຶ້ນດ້ວຍບຸກຄົນຕ່າງໆພາຍໃນກຸ່ມກ່ຽວພັນກັບບຸກຄົນອື່ນພຽງແຕ່ຢູ່ໃກ້ຊິດກັນເທົ່ານັ້ນ ແຕ່ພວກເຂົາຈະຕ້ອງເຮັດການຕັດສິນໃຈຕິດຕໍ່ສື່ສານສະໜັບສະໜູນປະສານງານ ແລະ ປະສົບຄວາມສຳເລັດໃນເປົ້າໝາຍອີກດ້ວຍ (ຊັດຊະວານ ແສງຈັກກະວານ, 2008, ໜ້າ. 52). ຜູ້ພັດທະນາແນວຄິດຂອງທິດສະດີນີ້ພະຍາຍາມອະທິບາຍຄວາມສຳຄັນລະຫວ່າງສະມາຊິກ ແລະ ຂະບວນການຂອງກຸ່ມ ເຊິ່ງຈະພາໃຫ້ເກີດຜົນຂອງການລວມກຸ່ມແນວຄິດຈາກທິດສະດີນີ້ ຈະເປັນພື້ນຖານຂອງການເຮັດໜ້າທີ່ໃນກຸ່ມໄດ້ຢ່າງດີ (ທິດສະນາ ແຂມມະນີ, 2008, ໜ້າ. 52). ການມີສ່ວນຮ່ວມ ເປັນການມີສ່ວນຮ່ວມ, ຮ່ວມກັບຄົນອື່ນ ໃນການກະທຳບາງຢ່າງ ຫຼື ບາງເລື່ອງ ຄຳວ່າການມີສ່ວນຮ່ວມຈະໃຊ້ໃນຄວາມໝາຍກົງກັນຂ້າມກັບຄຳວ່າ ການເມີນເສີຍ (ເສນຸມາດ ລັກສາແກ້ວ , 2014). ການມີສ່ວນຮ່ວມໝາຍເຖິງຂະບວນການດຳເນີນງານຮ່ວມກັນຂອງປະຊາຊົນກັບອົງກອນຂອງລັດຖະບານ ຫຼື ອົງການເອກະຊົນເພື່ອພັດທະນາແກ້ໄຂບັນຫາຂອງຊຸມຊົນ ໂດຍຢຶດຖືຫຼັກການວ່າສະມາຊິກໃນຊຸມຊົນນັ້ນຈະຕ້ອງຮ່ວມມືກັນວາງແຜນ ແລະ ຈັດຕັ້ງປະຕິບັດວຽກງານສະໜອງຄວາມຕ້ອງການ ຫຼື ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຂອງປະຊາຊົນໃນຊຸມຊົນ (ພິດສະໄໝ ວິຊາເທບ, 2013). ການມີສ່ວນໝາຍເຖິງ ການມີສ່ວນກ່ຽວຂ້ອງ ແລະ ການມີສ່ວນຮ່ວມທີ່ກ່ຽວຂ້ອງຈະສົ່ງຜົນໃຫ້ເກີດມີຄວາມຜູກພັນຕໍ່ ໜ່ວຍງານ ແລະ ກິດຈະການທີ່ຕົນມີສ່ວນຮ່ວມ (ເສີມສັກ ວິສາລະກອນ, 1994). ການມີສ່ວນຮ່ວມໝາຍເຖິງຂະບວນການຮ່ວມກັນຄິດ, ຮ່ວມກັນຕັດສິນໃຈ, ຮ່ວມລົງມືປະຕິບັດໂດຍມີຄວາມເຂົ້າໃຈບັນ ຫາຂອງຕົນ ແລະ ຄຳນຶງເຖິງສິດທິຂອງຕົນທີ່ມີຕໍ່ສິ່ງນັ້ນ ເຊິ່ງຄວາມຮູ້ສຶກເຫຼົ່ານີ້ຈະເກີດຂຶ້ນດ້ວຍການທີ່ບຸກຄົນໄດ້ຮັບຂໍ້ມູນໃໝ່ທີ່ຊ່ວຍເພີ່ມອຳນາດຄວາມຄິດ, ໂອກາດໄດ້ຮ່ວມ

ວິເຄາະ ແລະ ຕັດ ສິນໃຈກຳນົດເປົ້າໝາຍໃນກິດຈະກຳເຫຼົ່ານັ້ນ (ໂກວິດ ພວງງາມ, 1998).

ຈາກທິດສະດີຂ້າງເທິງ ສາມາດສະຫຼຸບໄດ້ວ່າ ການມີສ່ວນຮ່ວມໝາຍເຖິງຄວາມຮ່ວມມື, ຮ່ວມປະຕິບັດ ແລະ ຮ່ວມຮັບຜິດຊອບດ້ວຍກັນ ບໍ່ວ່າຈະເປັນບຸກຄົນ ຫຼື ກຸ່ມຄົນ ເພື່ອເຮັດໃຫ້ເກີດການດຳເນີນງານ, ຂອບເຂດພັດທະນາ ແລະ ເກີດການປ່ຽນແປງໃນທິດທາງທີ່ຕ້ອງການ ເຊິ່ງການມີສ່ວນຮ່ວມຂອງບຸກຄົນເປັນຍຸດທະສາດທີ່ສຳຄັນຕໍ່ການພັດທະນາໃນທຸກດ້ານ, ເຮັດໃຫ້ການ ຈັດຕັ້ງປະຕິບັດກິດຈະກຳການພັດທະນາຕ່າງໆໃຫ້ເກີດມີປະສິດທິພາບ ແລະ ເກີດມີຄວາມຍືນຍົງ.

ສິຣະ ສັດຍະໄພສານ (2014) ໄດ້ສຶກສາກ່ຽວກັບການພັດທະນາການຮຽນການສອນເລື່ອງຜົນຂອງການໃຊ້ເທັກນິກການອະພິປາຍກຸ່ມຍ່ອຍ ທີ່ມີຜົນຕໍ່ການຮຽນຮູ້ຂອງຜູ້ຮຽນໃນລາຍວິຊາ IMG 462 ສຳມະນາການຈັດການອຸດສະຫະກຳ ສາຂາວິຊາການຈັດການອຸດສະຫະກຳ ຄະນະບໍລິຫານທຸລະກິດການວິໄຈເທື່ອນີ້ເຮັດການສຳຫຼວດຈາກນັກສຶກສາ ສາຂາວິຊາການຈັດການອຸດສາຫະກຳທີ່ລົງທະບຽນຮຽນໃນວິຊາ IMG 462 ສຳມະນາການຈັດການອຸດສາຫະກຳໃນພາກການສຶກສາທີ 1 ປີ, ຈຳນວນ 20 ຄົນ. ຈຸດປະສົງຂອງການວິໄຈມີຄື 1) ເພື່ອສຶກສາຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ ເທັກນິກອະພິປາຍກຸ່ມຍ່ອຍໃນລາຍວິຊາ IMG 462 ສຳມະນາການຈັດການອຸດສາຫະກຳ, 2) ເພື່ອປຽບທຽບຜົນການປະເມີນການອະພິປາຍກຸ່ມ ໃນຣາຍວິຊາ IMG462 ສຳມະນາການຈັດການອຸດສາຫະກຳລະຫວ່າງເພື່ອນນັກສຶກສາກັບຄູອາຈານ. ຜົນການວິໄຈດ້ານຜົນສົມມຸດຖານທາງການຮຽນຂອງນັກສຶກສາ ພົບວ່າ ຄ່າສະເລ່ຍຂອງຄະແນນກ່ອນ ແລະ ຫຼັງການເຂົ້າຮ່ວມກິດຈະກຳໃນຫົວຂໍ້ ການພິຈາລະນາການວິເຄາະບັນຫາທາງອຸດສາຫະກຳມີຄວາມແຕກຕ່າງກັນມີຄວາມສຳຄັນໃນລະດັບ 0.05 ສະແດງໃຫ້ເຫັນວ່າ ຂະບວນການຮຽນຮູ້ໂດຍໃຊ້ເທັກນິກການອະພິປາຍກຸ່ມ ຈະສົ່ງຜົນໃຫ້ຜົນສົມມຸດຕິຖານທາງການຮຽນຂອງນັກສຶກສາດີຂຶ້ນສ່ວນຜົນການວິເຄາະຄວາມເພິ່ງພໍໃຈຂອງນັກ ສຶກສາໃນການເຂົ້າຮ່ວມຂະບວນການຮຽນຮູ້ໂດຍໃຊ້ເທັກນິກການອະພິປາຍກຸ່ມຍ່ອຍພົບວ່າ ຜູ້ທີ່ຕອບແບບສອບຖາມມີຄວາມຄວາມເພິ່ງພໍໃຈໃນການເຂົ້າຮ່ວມຂະບວນການຮຽນຮູ້ໂດຍໃຊ້ເທັກນິກການອະພິປາຍກຸ່ມຍ່ອຍຢູ່ໃນລະດັບຫຼາຍ. ອານັນ ຄຳພິຣານ (2023) ໄດ້ສຶກສາເລື່ອງ ການສຶກສາປຽບທຽບຜົນສຳເລັດທາງການຮຽນໃນຮູບແບບການຈັດການຮຽນ-ການສອນ ທີ່ເນັ້ນຜູ້ຮຽນເປັນສຳຄັນກັບວິທີການສອນປົກ ກະຕິໃນຫຼັກການອາຊີວະ ແລະ ເທັກນິກສຶກສາ ໂດຍມີຜົນການວິ ໄຈພົບວ່າ ຮູບແບບການຮຽນການສອນທີ່ເນັ້ນຜູ້ຮຽນເປັນສຳຄັນໂດຍໃຊ້ແຫຼ່ງຂໍ້ມູນເປັນຫຼັກທີ່ໄດ້ພັດທະນາຂຶ້ນໂດຍພັດທະນາມາຈາກແນວຄິດຂອງຟອກຮ່ວມກັບການປະເມີນຕາມສະພາບຈິງທີ່ໃຊ້ຮູບຣິກ ເຊິ່ງມີຜົນເຮັດໃຫ້ນັກສຶກສາທີ່ຮຽນດ້ວຍຮູບແບບການຈັດການຮຽນ-ການສອນທີ່ເນັ້ນຜູ້ຮຽນເປັນສຳຄັນມີຜົນສຳເລັດທາງການຮຽນສູງກວ່າ ທີ່ຮຽນດ້ວຍວິທີການປົກກະຕິທີ່ລະດັບສຳຄັນທາງສະຖິຕິ 0.05. ຟາລິດ ສຸລີ (2020) ໄດ້ສຶກສາເລື່ອງ ເທັກນິກການໃຊ້ຂະ ບວນການກຸ່ມໃນການພັດທະນາການວິເຄາະໃນການອ່ານ ພົບວ່າ ນັກສຶກສາມີຄວາມເຂົ້າໃຈທີ່ດີຂຶ້ນ ຈາກການທີ່ໄດ້ຮຽນຮູ້ ແລະ ແລກປ່ຽນຄວາມຄິດຈາກບຸກຄົນໃນກຸ່ມ ແລະ ນອກກຸ່ມ ເຊິ່ງຜູ້ສອນບໍ່ຈຳເປັນທີ່ຈະຕ້ອງໃຊ້ຮູບແບບທີ່ຕາຍຕົວ ແຕ່ສາມາດບໍລິ ຫານຈັດການໄດ້ຕາມຄວາມເໝາະສົມໂດຍທີ່ຜູ້ຮຽນນັ້ນມີທັດສະ ນະຄະຕິທີ່ດີຕໍ່ເທັກນິກດັ່ງກ່າວ. ສຸລິພົງ ວິຊິດ (2019) ໄດ້ສຶກສາເລື່ອງການພັດທະນາການຮຽນ-ການສອນກຸ່ມ ສ້າງເສີມປະສົບການຊີວິດລະດັບຊັ້ນປະ ຖົມສຶກສາ ປີທີ 6 ໂດຍໃຊ້ຮູບແບບການສອນແບບຮ່ວມມືກັນຮຽນຮູ້ ຜົນການຄົ້ນຄວ້າພົບວ່າ: ນັກຮຽນທີ່ໄດ້ຮັບການສອນແບບຮ່ວມມືກັນຮຽນຮູ້ຫຼາຍກວ່າ 80% ມີຜົນສຳເລັດທາງການຮຽນຜ່ານເກນຮອບຮູ້ທີ່ກຳນົດ 70% ຂອງຄະແນນເຕັມ ນອກຈາກນີ້ ນັກຮຽນຍັງເກີດການພັດທະນາທັກສະການເຮັດວຽກກຸ່ມອີກດ້ວຍ

ຈາກການທົບທວນຜົນງານວິໄຈທີ່ກ່ຽວຂ້ອງພົບວ່າການຮຽນ-ການສອນ ຊ່ວຍສ້າງເສີມປະສົບການຊີວິດທີ່ໄດ້ຮຽນຮູ້, ເນັ້ນຜູ້ຮຽນເປັນສຳຄັນໂດຍໃຊ້ແຫຼ່ງຂໍ້ມູນເປັນຫຼັກທີ່ໄດ້ພັດທະນາຂຶ້ນ, ແລກປ່ຽນຄວາມຄິດຈາກບຸກຄົນໃນກຸ່ມ ແລະ ນອກກຸ່ມໄດ້ເປັນຢ່າງດີ.

## 3. ວິທີດຳເນີນການຄົ້ນຄວ້າ

ໃນການສຶກສາເລື່ອງ "ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດ ສາດ ຊັ້ນມັດທະຍົມສຶກສາ ປີທີ7 ໃນໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູດົງຄຳໄຊ ສົກຮຽນ 2024-2025" ຜູ້ສຶກສາໄດ້ສຶກສາຄົ້ນຄວ້າຈາກເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງເພື່ອນຳຄວາມຮູ້ທີ່ໄດ້ຈາກການສຶກສາມາກຳນົດຂັ້ນຕອນ ແລະ ວິທີການດຳເນີນການສຶກສາ ເຊິ່ງໄດ້ແບ່ງອອກເປັນຂັ້ນຕອນຕ່າງໆດັ່ງລຸ່ມນີ້:

### *3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການວິໄຈໃນຄັ້ງນີ້ໄດ້ແກ່: ນັກຮຽນຊັ້ນ ມ7 ເຊິ່ງມີຈຳນວນ 2 ຫ້ອງ, ນັກຮຽນທັງໝົດ 45 ຄົນ, ຍິງ 23 ຄົນ ທີ່ໂຮງຮຽນ ມສ ສາທິດດົງຄຳໄຊ ເມືອງແປກ ແຂວງຊຽງຂວາງ ສົກຮຽນ 2024-2025, ໃນນັ້ນຜູ້ວິໄຈ ໄດ້ເລືອກແບບເຈາະຈົງເອົາພຽງແຕ່ ຫ້ອງ 7/2 ຈຳນວນ 17 ຄົນ. ຍ້ອນວ່າຫ້ອງດັ່ງກ່າວມີບັນຫາດ້ານການມີສ່ວນຮ່ວມຫຼາຍທີ່ສຸດ.

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ການສຶກສາເລື່ອງ "ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ7 ໃນໂຮງຮຽນມັດທະຍົມສາທິດວິທະຍາໄລຄູດົງຄຳໄຊ ສົກຮຽນ 2024-2025" ຄັ້ງນີ້. ຜູ້ວິໄຈໄດ້ໃຊ້ວິທີການສຶກສາແບບປະລິມານໂດຍເນັ້ນວິທີການສຶກສາຈາກເອກະສານ, ແບບສອບຖາມການສອນຂອງຄູ ເພື່ອໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງຕາມຈຸດປະສົງຂອງການວິໄຈທີ່ກຳນົດໄວ້ ໂດຍຜູ້ວິໄຈໄດ້ຈັດ

ວາງວິທີການໃຊ້ເພື່ອການເກັບກຳຮວບຮວມຂໍ້ມູນໃນແຕ່ລະສ່ວນຂອງວິທີການວິໄຈດັ່ງນີ້:

ແບບສອບຖາມການສອນຂອງຄູ ທີ່ຜູ້ວິໄຈນຳໃຊ້ເຂົ້າໃນການສຶກສາວິໄຈໃນຄັ້ງນີ້ ເປັນການສອບຖາມທີ່ມີໂຄງສ້າງເປັນເຄື່ອງມືໃນການເກັບຂໍ້ມູນໂດຍກົງ. ການສຶກສາໃນຄັ້ງນີ້ຜູ້ວິໄຈ ໄດ້ເຂົ້າໄປເກັບກຳຮວບຮວມຂໍ້ມູນໃນເວລາທີ່ຮ່ວມໂມງສອນໃນແຕ່ລະຄັ້ງ ເຊິ່ງໄດ້ໃຊ້ເຄື່ອງມືຊ່ວຍໃນການເກັບຮວບຮວມຂໍ້ມູນມີ: ແບບສອບຖາມການສອນຂອງຄູ. ໂດຍໃຊ້ເຄື່ອງມືເກັບກຳຂໍ້ມູນເຊິ່ງປະກອບມີດັ່ງນີ້:

1) ແບບສອບຖາມ: ເປັນຂໍ້ມູນວັດແທກລະດັບການມີສ່ວນຮ່ວມ ຕໍ່ກັບການປະຕິບັດກິດຈະກຳກຸ່ມ

ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ ໂດຍໃຊ້ເກນ (Likert Scale 5 ລະດັບ) ໂດຍກຳນົດເກນການໃຫ້ຄະແນນໃນການວິເຄາະຂໍ້ມູນດັ່ງນີ້:

ລະດັບ 5 ໝາຍເຖິງລະດັບ ດີທີ່ສຸດ

ລະດັບ 4 ໝາຍເຖິງລະດັບ ດີ

ລະດັບ 3 ໝາຍເຖິງລະດັບລະດັບ ປານກາງ

ລະດັບ 2 ໝາຍເຖິງລະດັບລະດັບ ໜ້ອຍ

ລະດັບ 1 ໝາຍເຖິງລະດັບລະດັບ ໜ້ອຍທີ່ສຸດ

2) ແບບທົດສອບ: ເປັນຂໍ້ມູນກ່ຽວກັບວັດແທກຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ.

*3.3 ວິທີເກັບກຳຂໍ້ມູນ*

ພາຍຫຼັງທີ່ສ້າງແບບສອບຖາມຮຽບຮ້ອຍແລ້ວຈາກນັ້ນກໍລົງເກັບກຳຂໍ້ມູນ, ມາດຳເນີນການຮວບຮວມວິເຄາະຂໍ້ມູນຕາມຂັ້ນຕອນໃນການວິໄຈທີ່ໄດ້ກຳນົດໄວ້ເຊິ່ງຜູ້ວິໄຈດຳເນີນການເກັບຮວບຮວມຂໍ້ມູນໂດຍມີຂັ້ນຕອນການດຳເນີນການດັ່ງນີ້:

1. ຜູ້ວິໄຈດຳເນີນການເກັບຂໍ້ມູນໂດຍນຳແບບທົດສອບໃຫ້ນັກຮຽນກ່ອນການສອນ, ຫຼັງຈາກນັ້ນຜູ້ສອນຈຶ່ງໄດ້ດຳເນີນການສອນດ້ວຍການຈັດກິດຈະກຳກຸ່ມ.

2. ພາຍຫຼັງດຳເນີນການສອນສຳເລັດ ຜູ້ສອນໄດ້ນຳແບບທົດສອບໃຫ້ນັກຮຽນຫຼັງການສອນ.

3. ຫຼັງຈາກນັ້ນໄດ້ຢາຍແບບສອບຖາມໃຫ້ນັກຮຽນຕອບ ແລະ ກຳນົດເວລາສົ່ງແບບສອບຖາມ.

*3.4 ການວິເຄາະຂໍ້ມູນ*

ຜູ້ວິໄຈວິເຄາະກ່ຽວກັບ "ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ7 ໃນໂຮງຮຽນມັດທະຍົມສາທິດວິທະຍາໄລຄູດົງໄຂ ສົກຮຽນ 2024-2025". ຈຳນວນ 17 ຄົນ ໃນການຕອບແບບສອບຖາມ. ຈາກນັ້ນ, ໄດ້ກວດສອບຄວາມຖືກຕ້ອງຂອງຂໍ້ມູນທີ່ເກັບຮວບຮວມໄດ້ຈາກແບບສອບຖາມກ່ອນບັນທຶກຂໍ້ມູນ ແລະ ວິເຄາະຂໍ້ມູນໃນໂປຼແກຼມ Microsoft Excel. ໂດຍການຫາຄ່າສະເລ່ຍ ແລະ ຄ່າຜົນປ່ຽນມາດຕະຖານຂອງຄະແນນເປັນແຕ່ລະດ້ານ ແລະ ເປັນແຕ່ລະຂໍ້ໂດຍໃຊ້ເກນການແປຄວາມໝາຍຂອງຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍ 4.51-5.00 ໝາຍເຖິງ ລະດັບຫຼາຍທີ່ສຸດ

ຄ່າສະເລ່ຍ 3.51-4.50 ໝາຍເຖິງ ລະດັບຫຼາຍ

ຄ່າສະເລ່ຍ 2.51-3.50 ໝາຍເຖິງ ລະດັບປານກາງ

ຄ່າສະເລ່ຍ 1.51-2.50 ໝາຍເຖິງ ລະດັບໜ້ອຍ

ຄ່າສະເລ່ຍ 1.00-1.50 ໝາຍເຖິງ ລະດັບໜ້ອຍທີ່ສຸດ

❖ **ຄ່າສະເລ່ຍ**

ສູດຄິດໄລ່ຄ່າສະເລ່ຍ

$$\bar{X} = \frac{\sum X}{N}$$

$\bar{X}$ ແມ່ນຄ່າສະເລ່ຍ

$\sum X$ ແມ່ນຜົນບວກຂອງຄະແນນທັງໝົດ

N ແມ່ນກຸ່ມຕົວຢ່າງທັງໝົດ

❖ **ຄ່າຜັນປ່ຽນມາດຖານ**

ສູດການຄິດໄລ່ຄ່າຜັນປ່ຽນມາດຖານ

$$SD = \sqrt{\frac{N\sum FX^2 - (\sum FX)^2}{N(N-1)}}$$

SD= ຄ່າຜັນປ່ຽນມາດຖານ

$\sum FX^2$ = ຜົນບວກຂອງຄະແນນແຕ່ລະຂໍ້ຂຶ້ນກຳລັງສອງ

$(\sum FX)^2$ = ແທນໃຫ້ກຳລັງສອງຂອງຜົນບວກຄະແນນທັງໝົດ

$N$ = ແມ່ນກຸ່ມຕົວຢ່າງທັງໝົດ

(ປິ້ມວັດ ແລະ ປະເມີນຜົນ, 2018).

- **ເກນການໃຫ້ຄະແນນແບບສອບຖາມສະພາບການສອນຂອງຄູ**
  - 5 ໝາຍເຖິງດີຫຼາຍ
  - 4 ໝາຍເຖິງດີ
  - 3 ໝາຍເຖິງປານກາງ
  - 2 ໝາຍເຖິງໜ້ອຍ
  - 1 ໝາຍເຖິງໜ້ອຍທີ່ສຸດ
- **ເກນການໃຫ້ຄະແນນໃນການເຮັດວຽກກຸ່ມ**
  - 10 ໝາຍເຖິງດີຫຼາຍ
  - 8-9 ໝາຍເຖິງດີ
  - 6-7 ໝາຍເຖິງປານກາງ
  - 4-5 ໝາຍເຖິງໜ້ອຍ
  - 1-3 ໝາຍເຖິງໜ້ອຍທີ່ສຸດ

## 4. ຜົນການຄົ້ນຄວ້າ

ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ7 ໃນໂຮງຮຽນມັດທະຍົມສົມບູນສາທິດ ວິທະຍາໄລຄູດົງໄຂ ສົກຮຽນ 2024-2025.

ຕາຕະລາງທີ 1: ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ໂດຍລວມ.

| ລດ | ເນື້ອໃນ | $\bar{X}$ | SD | ລະດັບ |
|---|---|---|---|---|

| | | | | |
|---|---|---|---|---|
| 1 | ການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດ ກິດຈະກຳກຸ່ມ ວິຊາປະຫວັດສາດ | 3.48 | 0.04 | ປານກາງ |
| 2 | ຜົນການຮຽນຮູ້ຂອງຜູ້ຮຽນ ຫຼັງຈາກໃຊ້ເຕັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ | 4.12 | 0.04 | ຫຼາຍ |
| ***ລວມ*** | | *3.80* | *0.04* | *ຫຼາຍ* |

ຈາກຕາຕະລາງທີ 1: ພົບວ່າ ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດໂດຍລວມແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.80, *SD= 0.04*), ເມື່ອພິຈາລະນາແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເຕັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ($\bar{X}$= 4.12; *SD=0.4*) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເຕັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ($\bar{X}$= 3.48; *SD= 0.04*).

1) ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025.

ຕາຕະລາງທີ 2: ສະແດງຜົນສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ໂດຍລວມ ແລະ ແຍກເປັນລາຍຂໍ້.

| ລດ | ເນື້ອໃນ | $\bar{X}$ | SD | ລະດັບ |
|---|---|---|---|---|
| 1 | ການກຽມການສອນທັງເນື້ອໃນ ແລະ ວິທີການ | 3.76 | 0.04 | ຫຼາຍ |
| 2 | ຄູຈັດສິ່ງແວດລ້ອມ ແລະ ບັນຍາກາດໃນຫ້ອງເສີມແຮງຈູງໃຈໃຫ້ຜູ້ຮຽນເກີດການຮຽນຮູ້ | 3.53 | 0.04 | ຫຼາຍ |
| 3 | ການແບ່ງໜ້າທີ່ປະຕິບັດພາຍໃນກຸ່ມ | 3.24 | 0.03 | ປານກາງ |
| 4 | ການຈັດກິດຈະກຳກຸ່ມໄດ້ສົ່ງເສີມໃຫ້ນັກຮຽນໄດ້ແລກປ່ຽນຄວາມຮູ້ຄວາມຄິດກັນ | 3.53 | 0.06 | ຫຼາຍ |
| 5 | ການຈັດກິດຈະກຳກຸ່ມເຮັດໃຫ້ນັກຮຽນກ້າຄິດກ້າຕອບ | 3.35 | 0.05 | ປານກາງ |
| 6 | ຄູໃຊ້ແຫຼ່ງຮຽນຮູ້ທີ່ຫຼາກຫຼາຍ ແລະ ເຊື່ອມກັບຊີວິດຈິງ | 3.59 | 0.05 | ຫຼາຍ |
| 7 | ການຈັດກິດຈະກຳກຸ່ມໄດ້ເຮັດໃຫ້ນັກຮຽນເຂົ້າໃຈບົດຮຽນຫຼາຍຂຶ້ນ | 3.41 | 0.03 | ປານກາງ |
| 8 | ຄູໃຊ້ສື່ການການສອນສອດຄ່ອງກັບເນື້ອໃນບົດຮຽນ | 3.53 | 0.04 | ຫຼາຍ |
| 9 | ຄູສັງເກດ ແລະ ປະເມີນພັດທະນາຜູ້ຮຽນຢ່າງຕໍ່ເນື່ອງ | 3.47 | 0.03 | ປານກາງ |
| 10 | ການກຽມການສອນທັງເນື້ອໃນ ແລະ ວິທີການ | 3.41 | 0.03 | ປານກາງ |
| ***ລວມ*** | | *3.48* | *0.04* | *ປານກາງ* |

ຈາກຕາຕະລາງທີ 2: ພົບວ່າ ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$=3.48, *SD= 0.04*), ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ການກຽມການສອນທັງເນື້ອໃນ ແລະ ວິທີການ ($\bar{X}$= 3.76; *SD= 0.04*) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນການແບ່ງໜ້າທີ່ປະຕິບັດພາຍໃນກຸ່ມ ($\bar{X}$ =3.24; *SD= 0.03*).

2) ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເຕັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ 7 ສົກຮຽນ 2024-2025.

ຕາຕະລາງທີ 3: ຜົນການຮຽນຮູ້ຂອງຜູ້ຮຽນ ຫຼັງຈາກໃຊ້ເຕັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນວິຊາ ປະຫວັດສາດ ໂດຍລວມ ແລະ ແຍກເປັນລາຍຂໍ້.

| ລດ | ເນື້ອໃນ | $\bar{X}$ | SD | ລະດັບ |
|---|---|---|---|---|
| 1 | ສົ່ງເສີມການເຮັດວຽກເປັນກຸ່ມ | 4.47 | 0.04 | ຫຼາຍ |
| 2 | ການຈັດກິດຈະກຳກຸ່ມໄດ້ເຮັດໃຫ້ຈື່ຈຳເນື້ອໃນໄດ້ດີ | 4.35 | 0.04 | ຫຼາຍ |
| 3 | ການຈັດກິດຈະກຳກຸ່ມຊ່ວຍໃຫ້ນັກຮຽນສ້າງຄວາມຮູ້ຄວາມເຂົ້າໃຈດ້ວຍຕົນເອງ | 4.18 | 0.04 | ຫຼາຍ |
| 4 | ການຈັດກິດຈະກຳກຸ່ມຊ່ວຍໃຫ້ນັກຮຽນຕັດສິນໃຈດ້ວຍເຫດຜົນ | 4.47 | 0.03 | ຫຼາຍ |
| 5 | ການຈັດກິດຈະກຳກຸ່ມເຮັດໃຫ້ນັກຮຽນເຂົ້າໃຈ ແລະ ຮູ້ຈັກເພື່ອນຫຼາຍຂຶ້ນ | 4.18 | 0.05 | ຫຼາຍ |

**P-ISSN:** 3078-5405; **E-ISSN:** 3080-2628

| | | | | |
|---|---|---|---|---|
| 6 | ຈັດກິດຈະກຳກຸ່ມໄດ້ໃຫ້ຜູ້ຮຽນໄດ້ສະແດງອອກຢ່າງສ້າງສັນ | 3.88 | 0.05 | ຫຼາຍ |
| 7 | ນັກຮຽນສາມາດແກ້ໄຂບັນຫາດ້ວຍຕົນເອງ | 3.65 | 0.05 | ຫຼາຍ |
| 8 | ບັນຍາກາດໃນການຮຽນມີຄວາມສະໜຸກສະໜານ | 4.12 | 0.04 | ຫຼາຍ |
| 9 | ການເປີດໂອກາດໃຫ້ຜູ້ຮຽນໄດ້ລົງມືປະຕິບັດກິດຈະກຳຕ່າງໆດ້ວຍຕົນເອງ | 3.82 | 0.05 | ຫຼາຍ |
| 10 | ຄູໄດ້ຕິດຕາມ ແລະ ຊ່ວຍເຫຼືອນັກຮຽນໃນເວລາປະຕິບັດກິດຈະກຳ | 4.06 | 0.04 | ຫຼາຍ |
| 11 | ຄວາມກະຕືລືລົ້ນຕໍ່ການຮຽນຂອງນັກຮຽນ | 4.24 | 0.04 | ຫຼາຍ |
| 12 | ການເປີດໂອກາດໃຫ້ນັກຮຽນໄດ້ເຮັດກິດຈະກຳສຳເລັດ | 4.00 | 0.04 | ຫຼາຍ |
| ***ລວມ*** | | *4.12* | *0.04* | *ຫຼາຍ* |

ຈາກຕາຕະລາງທີ 3: ພົບວ່າ ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນວິຊາປະຫວັດສາດ ໂດຍລວມ ແລະ ແຍກຕາມລາຍຂໍ້ແມ່ນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$ = 4.12, *SD= 0.04*), ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ສົ່ງເສີມການເຮັດວຽກເປັນກຸ່ມ, ການຈັດກິດຈະກຳກຸ່ມຊ່ວຍໃຫ້ນັກຮຽນຕັດສິນໃຈດ້ວຍເຫດຜົນ ($\bar{X}$ =4.47; *SD=0.04*) ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ນັກຮຽນສາມາດແກ້ໄຂບັນຫາດ້ວຍຕົນເອງ ($\bar{X}$=3.65; *SD= 0.05*).

ຕາຕະລາງທີ 4: ສະແດງຜົນການວິເຄາະຂໍ້ມູນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມ ເຂົ້າໃນການຮຽນ-ການສອນ.

| **ລ/ດ** | **ກຸ່ມທີ** | **ຄະແນນເຕັມ 10** | **ເປີເຊັນ (%)** |
|---|---|---|---|
| 1 | ກຸ່ມທີ 1 | 7 | 70 |
| 2 | ກຸ່ມທີ 2 | 8 | 80 |
| 3 | ກຸ່ມທີ 3 | 9 | 90 |
| 4 | ກຸ່ມທີ 4 | 9 | 90 |
| 5 | ກຸ່ມທີ 5 | 8 | 80 |
| ***ລວມສະເລ່ຍ*** | | *8.2* | *82* |

ຈາກຕາຕະລາງທີ 4: ສະແດງຜົນການວິເຄາະຂໍ້ມູນການຮຽນຮູ້ຂອງຜູ້ຮຽນ ຫຼັງຈາກໃຊ້ເທັກນິກການຈັດກຸ່ມ ເຂົ້າໃນການຮຽນ-ການສອນ ໂດຍລວມແມ່ນຢູ່ໃນລະດັບດີ ເຊິ່ງມີຄະແນນລວມເທົ່າກັບ 8,2 ຄິດເປັນເປີເຊັນເທົ່າກັບ 82%. ໃນນັ້ນ, ກຸ່ມທີ່ໄດ້ຄະແນນສູງກວ່າໝູ່ແມ່ນກຸ່ມທີ 3 ແລະ ກຸ່ມທີ 4 ໂດຍລວມແມ່ນຢູ່ໃນລະດັບດີ ເຊິ່ງມີຄະແນນເທົ່າກັບ 9 ຄິດເປັນເປີເຊັນແມ່ນເທົ່າກັບ 90 %. ກຸ່ມທີ່ໄດ້ຄະແນນຕ່ຳສຸດແມ່ນກຸ່ມທີ 1 ໂດຍລວມແມ່ນຢູ່ໃນລະດັບປານກາງ ເຊິ່ງມີຄະແນນເທົ່າກັບ 7 ຄິດເປັນເປີເຊັນແມ່ນເທົ່າກັບ 70%.

## 5. ອະພິປາຍຜົນ

ຜ່ານການສຶກສາກ່ຽວກັບຫົວຂໍ້ "ພັດທະນາແນວທາງການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາ ປະຫວັດສາດ ຊັ້ນມັດທະຍົມສຶກສາ ປີທີ7 ໃນໂຮງຮຽນມັດທະ ຍົມສົມບູນສາທິດ ວິທະຍາໄລຄູຄັງໄຂ ສົກຮຽນ 2024-2025. ສາມາດນຳເອົາຜົນການສຶກສາທີ່ຄົ້ນພົບຈາກການວິໄຈຄັ້ງນີ້ມາອະ ພິປາຍຜົນທຽບໃສ່ກັບແນວຄິດທິດສະດີ ແລະ ບົດວິໄຈທີ່ກ່ຽວ ຂ້ອງເພື່ອອະພິປາຍຜົນຕາມຈຸດປະສົງດັ່ງນີ້:

ສະພາບການມີສ່ວນຮ່ວມຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ 7 ສົກຮຽນ 2024-2025 ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3.80) ອາດເປັນເພາະວ່າ ການຈັດກິດຈະກຳກຸ່ມເຮັດໃຫ້ນັກຮຽນ ແລະ ກ້າສະແດງອອກຫຼາຍກວ່າການຮຽນແບບບັນຍາຍ ເຊິ່ງສອດຄ່ອງກັບ ໂກວິດ ພວງງາມ (1998) ໄດ້ໃຫ້ທັດສະນະວ່າ ການມີສ່ວນຮ່ວມໝາຍເຖິງຂະບວນການຮ່ວມກັນຄິດ, ຮ່ວມກັນຕັດສິນໃຈ, ຮ່ວມລົງມືປະຕິບັດໂດຍມີຄວາມເຂົ້າໃຈບັນຫາຂອງຕົນ ແລະ ຄຳນຶງເຖິງສິດ ທິຂອງຕົນທີ່ມີຕໍ່ສິ່ງນັ້ນ ເຊິ່ງຄວາມຮູ້ສຶກເຫຼົ່ານີ້ຈະເກີດຂຶ້ນດ້ວຍການທີ່ບຸກຄົນໄດ້ຮັບຂໍ້ມູນໃໝ່ທີ່ຊ່ວຍເພີ່ມອຳນາດຄວາມຄິດ, ໂອກາດໄດ້ຮ່ວມວິເຄາະ ແລະ ຕັດສິນໃຈກຳນົດເປົ້າໝາຍໃນກິດຈະກຳເຫຼົ່ານັ້ນ. ນອກນັ້ນຍັງສອດຄ່ອງກັບ ສຸລະພົງ ວິຊິດ (2019) ໄດ້ເຮັດການຄົ້ນຄວ້າເລື່ອງການພັດທະນາການຮຽນ-ການສອນ ກຸ່ມສ້າງເສີມປະສົບການຊີວິດລະດັບຊັ້ນປະຖົມສຶກສາ ປີທີ 6 ໂດຍໃຊ້ຮູບແບບການສອນແບບຮ່ວມມືກັນຮຽນຮູ້ຜົນການຄົ້ນຄວ້າພົບວ່າ: ນັກຮຽນທີ່ໄດ້ຮັບການສອນແບບຮ່ວມມືກັນຮຽນຮູ້ຫຼາຍກວ່າ 80% ມີຜົນສຳເລັດທາງການຮຽນຜ່ານເກນຮອບຮູ້ທີ່ກຳນົດ 70% ຂອງຄະແນນເຕັມ ນອກຈາກນີ້ ນັກຮຽນຍັງເກີດການພັດ ທະນາທັກສະການເຮັດວຽກກຸ່ມອີກດ້ວຍ ແລະ ຍັງສອດຄ່ອງກັບ ອານັນ ຄຳພິຣານ (2012) ໄດ້ທຳການສຶກສາເລື່ອງການສຶກສາປຽບທຽບຜົນສຳເລັດທາງການຮຽນລະຫວ່າງຮູບແບບການຈັດ ການຮຽນ-ການສອນ ທີ່ເນັ້ນຜູ້ຮຽນເປັນສຳຄັນກັບວິທີການສອນປົກກະຕິໃນຫຼັກການອາຊີວະ ແລະ ເທັກນິກສຶກສາ ໂດຍມີຜົນການວິໄຈພົບວ່າຮູບແບບການຮຽນ-ການສອນ ທີ່ເນັ້ນຜູ້ຮຽນເປັນສຳຄັນໂດຍໃຊ້ແຫຼ່ງຂໍ້ມູນເປັນຫຼັກທີ່ໄດ້ພັດທະນາຂຶ້ນໂດຍພັດທະນາມາຈາກແນວຄິດຂອງຟອກ ຮ່ວມກັບການປະເມີນຕາມສະພາບຈິງທີ່ໃຊ້ ຣູບຣິກ ຊຶ່ງມີຜົນເຮັດໃຫ້ນັກສຶກສາທີ່ຮຽນດ້ວຍຮູບແບບການຈັດ ການຮຽນ-ການສອນ ທີ່ເນັ້ນຜູ້ຮຽນ

ເປັນສຳຄັນມີຜົນສຳເລັດທາງການຮຽນສູງກວ່າ ທີ່ຮຽນດ້ວຍວິທີການປົກກະຕິທີ່ລະ ດັບສຳຄັນທາງສະຖິຕິ 0.05.

ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ ຊັ້ນມັດທະ ຍົມສຶກສາ ປີທີ 7 ສົກຮຽນ 2024-2025 ໂດຍລວມເຮັດໃຫ້ຄະແນນຫຼັງການຮຽນສູງກວ່າກ່ອນການຮຽນ ເປັນເພາະການແລກປ່ຽນຄວາມຮູ້ພາຍໃນກຸ່ມຊ່ວຍໃຫ້ຜູ້ຮຽນເຂົ້າໃຈເນື້ອຫາປະຫວັດສາດທີ່ຊັບຊ້ອນໄດ້ງ່າຍຂຶ້ນ ຈຶ່ງເຮັດໃຫ້ຜົນການປະຕິບັດກິດຈະກຳໄດ້ດີ ເຊິ່ງສອດຄ່ອງກັບ ທິດສະດີ ເກຣກໍຣີ ຄິມເບີດ (Gregory Kimble) ໃຫ້ຄວາມໝາຍວ່າ ການຮຽນຮູ້ຄືການປ່ຽນແປງພຶດຕິກຳທີ່ຂ້ອນຂ້າງຈະຖາວອນ ອັນສືບເນື່ອງມາຈາກປະສົບການ ຫຼື ການຝຶກຫັດເຊິ່ງທ່ານໄດ້ໃຫ້ລັກສະນະສຳຄັນຂອງການຮຽນຮູ້ 3 ປະການດ້ວຍກັນຄື: 1) ການຮຽນຮູ້ເປັນຜົນຂອງປະສົບການ ຫຼື ການຝຶກຝົນຊ້ຳຊາກ ຖ້າການປ່ຽນແປງພຶດຕິກຳໄດ້ເປັນຜົນຈາກຂະບວນການຈະເລີນເຕີບໂຕຂອງສະພາວະ ຫຼື ອິດທິພົນຂອງສານເຄມີໃນຮ່າງກາຍ ຫຼື ຄວາມບົກພອງຂອງຮ່າງກາຍ ບໍ່ຖືວ່າເປັນພຶດຕິກຳທີ່ເກີດຈາກການຮຽນຮູ້ເຊັ່ນ: ພຶດຕິກຳຂອງການກະຕຸກຂອງກ້າມຊີ້ນ ອັນເນື່ອງມາຈາກຄວາມພິການຂອງສະໝອງ ບໍ່ຖືວ່າເປັນພຶດຕິກຳທີ່ເກີດຈາກການຮຽນ. 2) ການຮຽນຮູ້ໃຫ້ຜົນໃນແງ່ຂອງການປ່ຽນແປງພຶດຕິກຳ, ພຶດຕິກຳທີ່ເປັນຢູ່ກໍຈະປ່ຽນໄປທັນທີຫຼັງຜ່ານຂະບວນການຮຽນຮູ້ ໂດຍທີ່ການປ່ຽນແປງພຶດຕິກຳນັ້ນອາດເປັນໄປໃນທາງທີ່ດີຂຶ້ນ ຫຼື ບໍ່ດີກວ່າເກົ່າກໍໄດ້ເຊັ່ນ: ຫຼັງຈາກການຮຽນຮູ້ຈາກໜັງສື ບາງຄົນປ່ຽນພຶດຕິກຳຈາກການບໍ່ອອກກຳລັງກາຍ ເປັນອອກກຳລັງກາຍທຸກວັນ ຫຼື ບາງຄົນປ່ຽນພຶດ ຕິກຳຈາກບໍ່ຫຼິ້ນການພະນັນ ເປັນການຫຼິ້ນການພະນັນ. 3) ການຮຽນຮູ້ເປັນການປ່ຽນແປງໃຫ້ລັກສະນະຂ້ອນຂ້າງຖາວອນພຶດຕິກຳທີ່ປ່ຽນແປງໄປຊົ່ວຄັ້ງຊົ່ວຄາວບໍ່ອາດເອີ້ນໄດ້ວ່າເປັນການຮຽນຮູ້ການຮຽນຮູ້ຈຶ່ງຕ້ອງເປັນການປ່ຽນແປງພຶດຕິກຳໃນລັກສະນະຂ້ອນຂ້າງຖາວອນ ແລະ ບໍ່ສາມາດລຶບລ້າງການຮຽນຮູ້ທີ່ເກີດຂຶ້ນນັ້ນອອກໄປໄດ້ເຊັ່ນ ຄົນທີ່ຖີບລົດຖີບເປັນແລ້ວກໍຍ່ອມຖີບລົດຖີບເປັນຕະຫຼອດໄປພຽງແຕ່ຄວາມຄ່ອງແຄ້ວໃນການຖີບລົດອາດປ່ຽນໄປຖ້າບຸກຄົນນັ້ນເລີຍການຖີບລົດໄປດົນ. ນອກນັ້ນ ຍັງສອດ ຄ່ອງກັບ ຟາລິດ ສຸລີ (2020) ໄດ້ເຮັດການສຶກສາເລື່ອງ ເທັກນິກການໃຊ້ຂະບວນການກຸ່ມໃນການພັດທະນາການວິເຄາະໃນການອ່ານພົບວ່າ ນັກສຶກສາມີຄວາມເຂົ້າໃຈທີ່ດີຂຶ້ນຈາກການທີ່ໄດ້ຮຽນຮູ້ ແລະ ແລກປ່ຽນຄວາມຄິດຈາກບຸກຄົນໃນກຸ່ມ ແລະ ນອກກຸ່ມຊຶ່ງຜູ້ສອນບໍ່ຈຳເປັນທີ່ຈະຕ້ອງໃຊ້ຮູບແບບທີ່ຕາຍຕົວ ແຕ່ສາມາດບໍລິຫານຈັດການໄດ້ຕາມຄວາມເໝາະສົມ ໂດຍທີ່ຜູ້ຮຽນນັ້ນມີທັດສະນະຄະຕິທີ່ດີຕໍ່ເທັກນິກດັ່ງກ່າວ.

## 6. ສະຫຼຸບຜົນ

ການຄົ້ນຄວ້ານີ້ມີຈຸດປະສົງເພື່ອສຶກສາສະພາບມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິບັດກິດຈະກຳກຸ່ມ ວິຊາປະຫວັດສາດ ແລະ ເພື່ອສຶກສາຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດ. ຈາກການຄົ້ນຄວ້າສາມາດສະຫຼຸບໄດ້ວ່າ ສະພາບການມີສ່ວນຮ່ວມຂອງນັກຮຽນຕໍ່ກັບການປະຕິ ບັດກິດຈະກຳກຸ່ມ ວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ 7 ສົກຮຽນ 2024-2025 ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3.80). ຜົນການຮຽນຮູ້ຂອງຜູ້ຮຽນຫຼັງຈາກໃຊ້ເທັກນິກການຈັດກຸ່ມເຂົ້າໃນການຮຽນ-ການສອນ ວິຊາປະຫວັດສາດແມ່ນສູງກວ່າກ່ອນການນຳໃຊ້ເທັກນິກການຈັດກຸ່ມຢ່າງຊັດເຈນ.

## 7. ຂໍ້ຈຳກັດຂອງການຄົ້ນຄວ້າ

1) ດ້ານກຸ່ມຕົວຢ່າງ: ການສຶກສານີ້ເນັ້ນໃສ່ສະເພາະນັກຮຽນຊັ້ນ ມ 7/2 ຂອງໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູຄັງໄຂເທົ່ານັ້ນ, ຜົນການວິໄຈ ຈຶ່ງບໍ່ມາສາມາດນຳໄປໃຊ້ແທນນັກຮຽນ ທົ່ວປະເທດໄດ້ທັງໝົດ.

2) ດ້ານໄລຍະເວລາ: ເນື່ອງຈາກມີເວລາຈຳກັດໃນການທົດລອງສອນ, ການປ່ຽນແປງພຶດຕິກຳການມີສ່ວນຮ່ວມຂອງນັກນຽນບາງຄົນອາດຍັງບໍ່ທັນສະແດງອອກຢ່າງເຕັມສ່ວນ ແລະ ອື່ນໆ

## 8. ຂໍ້ສະເໜີແນະ

**1) ສະເໜີແນະໃນການນຳຜົນການຄົ້ນຄວ້າໄປໃຊ້**

- ສຳລັບຄູ: ຄວນນຳໃຊ້ເຕັກນິກກິດຈະກຳກຸ່ມຮ່ວມກັບການນຳໃຊ້ສື່ປະຈັກຕາ (ເຊັ່ນ: ແຜນທີ່ປະຫວັດສາດ, ວິດີໂອສັ້ນ) ເພື່ອກະຕຸ້ນຄວາມສົນໃຈກ່ອນເລີ່ມເຮັດວຽກກຸ່ມ.
- ການຈັດກຸ່ມ: ຄວນເລືອກສະມາຊິກໃນກຸ່ມໃຫ້ມີຄວາມສາມາດປະປົນກັນ (ເກັ່ງ, ກາງ, ອ່ອນ) ເພື່ອໃຫ້ເກີດການຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

**2) ສະເໜີແນະສຳລັບການຄົ້ນຄວ້າຄັ້ງຕໍ່ໄປ**

- ສະເໜີໃຫ້ມີການຄົ້ນຄວ້າປຽບທຽບລະຫວ່າງເຕັກນິກການຈັດກຸ່ມແບບຕ່າງໆເຊັ່ນ: Jigsaw ຫຼື STSD ເພື່ອຫາວິທີທີ່ເໝາະສົມສຳລັບວິຊາປະຫວັດສາດ.

## 9. ເອກະສານອ້າງອີງ

ສຸລິພົງ ວິຊິດ. (2019). *ການພັດທະນາການຮຽນ-ການສອນກຸ່ມ ສ້າງເສີມປະສົບການຊີວິດລະດັບຊັ້ນປະຖົມສຶກສາ ປີທີ6 ໂດຍໃຊ້ຮູບແບບຮ່ວມມືກັນຮຽນຮູ້.*

ປົ້ມວັດ ແລະ ປະເມີນຜົນ. (2018). *ການວັດ ແລະ ປະເມີນຜົນ ສາຍສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ.* ກົມສ້າງຄູ.

ເສນຸມາດ ລັກສາແກ້ວ. (2014). *ການມີສ່ວນຮ່ວມຂອງນັກສຶກສາໃນການຮຽນ.* ວິທະຍາໄລເທັກນິກລາດຊະບູລີ.

ສະເຫຼີມ ມະລິລາ. (2002). *ຫຼັກການສອນ ແລະ ວິທີສອນປະຫວັດສາດ.* ນະຄອນຫຼວງວຽງຈັນ: ອາລຸນການພິມ.

ສິຣະ ສັດຍະໄພສານ. (2014). *ການພັດທະນາການຮຽນ-ການສອນ ເລື່ອງຜົນຂອງການໃຊ້ເທັກນິກການອະພິປາຍກຸ່ມຍ່ອຍທີ່ມີຜົນຕໍ່ການຮຽນຮູ້ໃນລາຍວິຊາ IMG 462 ສາມະນາການຈັດການອຸດສາຫະກຳ.* ຄະນະບໍລິຫານທຸລະກິດ.

ສິນທະຍາ ພົນສີ. (2004, ໜ້າ. 2). *ການພັດທະນາການຮຽນ-ການສອນ.* ວິທະຍາໄລເທັກນິກລາດຊະບູລີ.

ຊັດຊະວານ ແສງຈັກກະວານ. (2008, ໜ້າ. 52). *ການນຳໃຊ້ວິທີສອນແບບຈັດກຸ່ມ.* ຄະນະສຶກສາສາດ. ມະຫາວິທະຍາໄລນະເຣສວນ.

ຍຸວັດ ວຸດເມທີ. (2003, ໜ້າ. 1). *ຫຼັກການໃນການພັດທະນາ.* ມະຫາຈຸລາລົງກອນ.

ທິດສະນາ ແຂມມະນີ. (2008, ໜ້າ. 52). *ວິທະຍາສາດການສອນ.* ກຸງເທບ. ມະຫາວິທະຍາໄລຈຸລາລົງກອນ.

ນັນຊຸພົນ ຂັນໄຊ. (2010). *ແນວທາງການພັດທະນາ.* ກຸງເທບມະຫານະຄອນ.

ປະກອນ ປິຍາກອນ. (1995, ໜ້າ. 5). *ຮູບແບບໃນການພັດທະນາ.* ກຸງເທບມະຫານະຄອນ: ບໍລິສັດພິມດີຈຳກັດ.

ພິດສະໄໝ ວິຊາເທບ. (2013). *ເທັກນິກການມີສ່ວນຮ່ວມ.* ກຸງເທບມະຫານະຄອນ.

ຟາລິດ ສຸລີ. (2020). *ເທັກນິກການໃຊ້ຂະບວນການກຸ່ມໃນການພັດທະນາການວິເຄາະໃນການອ່ານ.* ກຸງເທບ.

ວັນນີ ຍ່າງເຈຍມົວ. (2019). *ຄູ່ມືການຂຽນບົດລາຍງານຈົບຊັ້ນ ແລະ ສຶກສາການສອນ.* ວິທະຍາໄລຄູດົງໄຂ.

ອານັນ ຄຳພິຣານ. (2023). *ການສຶກສາປຽບທຽບຜົນສຳເລັດທາງການຮຽນລະຫວ່າງຮູບແບບການຈັດການຮຽນ-ການສອນ ທີ່ເນັ້ນຜູ້ຮຽນເປັນສຳຄັນກັບວິທີການສອນປົກກະຕິໃນຫຼັກການອະຊີວະ ແລະ ເທັກນິກສຶກສາ.* ກຸງເທບມະຫານະຄອນ.

ເສີມສັກ ວິສາລະກອນ. (1994). *ຂະບວນການຈັດການຮຽ-ການສອນ.* ຄະນະສຶກສາສາດ. ມະຫາວິທະຍາໄລນະເຣສວນ.

ໂກວິດ ພວງງາມ. (1998). *ຫຼັກການ ແລະ ຂະບວນການມີສ່ວນຮ່ວມ.* ມະຫາວິທະຍາໄລກະເສດສາດ.